ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ
ກົມອາຫານ ແລະ ຢາ
ໂທ: 021 255 361
ແຟັກ: 021 213 495

ເລກທີ 7754 /2021.ກອຢ
ນະຄອນຫຼວງວຽງຈັນ, ວັນທີ 18 AUG 2021

# ໜັງສືແຈ້ງການ

ເຖິງ: ຫົວໜ່ວຍທຸລະກິດທີ່ດຳເນີນການຜະລິດ ແລະ ນຳເຂົ້າຜະລິດຕະພັນເຄື່ອງສຳອາງ.

ເລື່ອງ: ການຈັດຕັ້ງປະຕິບັດກ່ຽວກັບການຫ້າມ ຫຼື ຈຳກັດປະລິມານບັນດາສານຕ່າງໆທີ່ໃຊ້ເປັນສ່ວນປະສົມໃນເຄື່ອງສຳອາງ.

- ອີງຕາມ ບົດລາຍງານຜົນຂອງກອງປະຊຸມເຄື່ອງສຳອາງວິທະຍາສາດອາຊຽນ ເລກທີ $32^{nd}$ Meeting of ACSB.

ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ຂໍແຈ້ງມາຍັງບັນດາຫົວໜ່ວຍທຸລະກິດທີ່ດຳເນີນການຜະລິດ ແລະ ນຳເຂົ້າຜະລິດຕະພັນເຄື່ອງສຳອາງຊາບວ່າ: ປະຈຸບັນບັນດາປະເທດອາຊຽນໄດ້ຕົກລົງເຫັນດີເປັນເອກະພາບກັນໃນການຈັດຕັ້ງປະຕິບັດກ່ຽວກັບການຫ້າມ ຫຼື ຈຳກັດປະລິມານບັນດາສານຕ່າງໆທີ່ໃຊ້ເປັນສ່ວນປະສົມໃນເຄື່ອງສຳອາງດັ່ງລາຍລະອຽດລຸ່ມນີ້:

1. ສານ **Tagetes erecta**: ສານສະກັດຈາກດອກດາວເຮືອງ ຫຼື ໄດ້ຖືກຈັດເຂົ້າໃນເອກະສານຊ້ອນທ້າຍທີ 3 ເພື່ອຈຳກັດປະລິມານໃຊ້ ໂດຍຈະມີຜົນບັງຄັບໃຊ້ໃນວັນທີ 8 ມີນາ 2022.
2. ສານ **Paraformaldehyde ແລະ Methylene Glycol** ໄດ້ຖືກຈັດເຂົ້າໃນເອກະສານຊ້ອນທ້າຍທີ 2 ເພື່ອຫ້າມໃຊ້ໃນຜະລິດຕະພັນເຄື່ອງສຳອາງ ໂດຍຈະມີຜົນບັງຄັບໃຊ້ໃນວັນທີ 8 ມີນາ 2022.
3. ສານ **Formaldehyde**: ໄດ້ຖືກຫຼຸດປະລິມານທີ່ອະນຸຍາດໃຫ້ນຳໃຊ້ຈາກ 5 % ມາເປັນ 2.2% ໃນຜະລິດຕະພັນສຳລັບເລັບ.
4. ສານ **Dibutyltin Hydrogen Borate**: ໄດ້ຖືກຈັດເຂົ້າໃນເອກະສານຊ້ອນທ້າຍທີ 2 ເພື່ອຫ້າມໃຊ້ໃນຜະລິດຕະພັນເຄື່ອງສຳອາງ ໂດຍຈະມີຜົນບັງຄັບໃຊ້ໃນວັນທີ 8 ກັນຍາ 2021.
5. **ຜະລິດຕະພັນເຈວລ້າງມືທີ່ມີສ່ວນຜະສົມຂອງເຫຼົ້າ (Hand Sanitizer)**: ແມ່ນຜະລິດຕະພັນເຄື່ອງສຳອາງ, ດັ່ງນັ້ນຜະລິດຕະພັນດັ່ງກ່າວຕ້ອງໄດ້ປະຕິບັດການຈົດແຈ້ງກ່ອນການນຳເຂົ້າ ເພື່ອຈຳໜ່າຍ ແລະ ຕ້ອງໄດ້ມາດຕະຖານດັ່ງລຸ່ມນີ້:
   - ຕ້ອງມີປະລິມານເຫຼົ້າຫຼາຍກວ່າ 70%
   - ປະລິມານ Methanol ບໍ່ໃຫ້ເກີນ 5%
   - ຜະລິດຕະພັນນີ້ຈະຕ້ອງໄດ້ກວດວິໄຈຄຸນນະພາບກ່ອນການນຳເຂົ້າ ແລະ ຈຳໜ່າຍເຊິ່ງຄ່າໃຊ້ຈ່າຍແມ່ນຄວາມຮັບຜິດຊອບຂອງຜູ້ຜະລິດ ແລະ ນຳເຂົ້າທັງໝົດ.
6. **Plastic Microbeads:** ແມ່ນຫ້າມໃຊ້ໃນຜະລິດຕະພັນເຄື່ອງສຳອາງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມທາງຄວນດ້ວຍ.

ຫົວໜ້າກົມ

ຮສ. ດຣ. ບຸນຊູ ແກ້ວຫາວົງ

ໝາຍເຫດ: ແຈ້ງການສະບັບນີ້ແມ່ນປ່ຽນແທນແຈ້ງການສະບັບເລກທີ 8594/2020.ກອຢ, ລົງວັນທີ 13 ຕຸລາ 2020